# ເຈົ້າຮູ້ບໍ່ເປັນຫຍັງແຫລວຈຶ່ງກິນໄກ່?
## ນິທານສຳລັບເດັກນ້ອຍ.




ຂຽນໂດຍ : ອາຈານ ໂບດິນ ຄູນເຊັ້ນ
ແປໂດຍ : ຄູບາ ແອ່ນ ສຸຂະຜົນ
ພາບປະກອບໂດຍ : ຄູບາ ເພັດສະໝອນ ທ່ອນມີໄຊ

วันที่ ๑๗/๑๐/๐๔

[illegible]

[illegible]

ຫລາຍປີຜ່ານມາມີຜູ້ຄົນໄດ້ອາໄສຢູ່ໃນຜືນແຜ່ນດິນທີ່ສາມາດພົບເຫັນແມ່ແຫລວຢູ່ໃນປ່າ. ແມ່ແຫລວຊື່ ເມັດດາ ໄດ້ມີລູກຫລາຍ ຄົນ ແຕ່ລະຄົນມີສຸຂະພາບແຂງແຮງໝົດ ຢູ່ມາວັນໜຶ່ງ ລູກຂອງລາວມີອາການເຈັບປ່ວຍຢ່າງຮ້າຍແຮງ. ແມ່ແຫລວໄດ້ມີຄວາມກັງວົນ ເປັນຫ່ວງກັບລູກຂອງຕົນ, ແລ້ວລາວກໍ່ຖາມນ້ອງສາວຂອງລາວຊື່ເອັດດາວ່າ ລາວຄວນເຮັດແນວໃດ. ເອັດດາ ໄດ້ມີຄວາມຄິດເຫັນ ອັນດີເລີດ ແລະ ເວົ້າວ່າ : " ຂ້ອຍຮູ້ທ່ານໝໍທີ່ດີທີ່ສຸດ, ໃນປ່າແຫ່ງນີ້ຄື ທ່ານໝໍແມງມູມເພິ່ນ ແມ່ນທ່ານໝໍຜູ້ໜຶ່ງທີ່ມີຄວາມສາມາດ ແລະ ມີຊື່ສຽງທີ່ສຸດ,



ນ້ອງສາວຂອງແມ່ແຫລວກໍ່ໄດ້ຫໍ່ເອົາບາງສິ່ງບາງຢ່າງ ແລ້ວກໍ່ໄດ້ບິນເຂົ້າໄປໃນປ່າ ເພື່ອຊອກຫາທ່ານຫມໍແມງມູມ. ຕໍ່ມາລາວກໍ່ໄດ້ເຫັນແມງມູມທີ່ກຳລັງນອນຕາກແດດຢູ່ໃນຮັງອັນສວຍງາມທີ່ສຸດຂອງມັນ ແລະ ຢູ່ຕິດກັບຕົ້ນໂອກ. ຕາມປົກກະຕິແລ້ວຖົງຢາຂອງ ທ່ານຫມໍແມ່ນກຽມພ້ອມທຸກສະຖານະການໃນເວລາສຸກເສີນ. ເອັດດາ ເວົ້າວ່າ " ທ່ານຫມໍເອີຍ ! ຫລານຊາຍຂອງຂ້ອຍມີອາການ ເຈັບປ່ວຍໜັກຫລາຍ ແລະ ຕ້ອງການຄວາມຊ່ວຍເຫຼືອຈາກທ່ານຫມໍ. ຂ້ອຍມາຂໍຄວາມຊ່ວຍເຫຼືອຈາກທ່ານ. ທ່ານຫມໍຕອບວ່າ: " ຂ້ອຍ ຮູ້ເອື້ອຍຂອງເຈົ້າດີ ແລະ ຂ້ອຍຄວນຊ່ວຍລາວ. ແຕ່ວ່າລາວໄດ້ອາໄສຢູ່ໃກ້ກັບເຮືອນຂອງແມ່ໄກ່ ຂ້ອຍຢ້ານເມື່ອເວລາເດີນທາງກາຍໄປ ເພາະວ່າໄກ່ມັກກິນແມງມູມຫລາຍ ". ເອັດດາ ຕອບວ່າ : " ເຈົ້າບໍ່ຕ້ອງກັງວົນ ຂ້ອຍບໍ່ຄິດເລີຍວ່າ ໄກ່ຈະທຳຮ້າຍທ່ານຫມໍທີ່ເດີນທາງ ໄປ ເພື່ອຊ່ວຍເດັກທີ່ກຳລັງປ່ວຍຢູ່ ".



ທ່ານຫມໍແມງມູມເຫັນດີທີ່ຈະໄປເບິ່ງເດັກທີ່ກຳລັງເຈັບປ່ວຍຢູ່ ແລະ ທ່ານຫມໍກໍ່ໄດ້ເລີ່ມຕົ້ນທີ່ເອົາຢາອີກຕື່ມ ທີ່ກຽມພ້ອມໄວ້ນັ້ນຫລາຍຢ່າງພ້ອມທັງຢາສັກ ແລະ ຢາກິນໃສ່ຖົງອັນທີ່ມີເຄື່ອງໝາຍຂອງສະພາກາແດງ ແຕ່ລາວກໍ່ບໍ່ແນ່ໃຈວ່າ ເອັດດາ ຈະເວົ້າຖືກ ຫຼື ບໍ່ຕໍ່ກັບຄວາມຕັ້ງໃຈຂອງໄກ່. ໃນຂະນະນັ້ນ ລາວກໍ່ໄດ້ຂຽນໜັງສືດ້ວຍລາຍມືຂອງລາວເອງແລ້ວກໍ່ເອົາປະໄວ້ໃນຖົງ. ໃນຈົດໝາຍ ລາວໄດ້ຂຽນວ່າ : " ຂ້ອຍກຳລັງຈະໄປຊ່ວຍ ເມັດດາ ຜູ້ທີ່ລູກຂອງລາວກຳລັງປ່ວຍຢູ່ ແຕ່ວ່າໄກ່ພັດກິນຂ້ອຍຊໍ້າ " ແລ້ວຫລັງຈາກນັ້ນ ລາວກໍ່ໄດ້ອອກເດີນທາງໄປລາວໄດ້ເລີ່ມຕົ້ນຍ່າງ ແລະ ກໍ່ຍ່າງໄວເທົ່າທີ່ລາວສາມາດ, ລາວໄດ້ຮູ້ວ່າສະຖານະການແມ່ນລຳບາກຫລາຍ. ໃນຂະນະນັ້ນ ເມັດດາ ແລະ ນ້ອງສາວຂອງລາວໄດ້ມີຄວາມກັງວົນຫລາຍຂຶ້ນເພາະວ່າເວລາໄດ້ຜ່ານພົ້ນໄປແຕ່ທ່ານຫມໍກໍ່ຍັງບໍ່ມາຮອດ ເຮືອນຂອງຄົນປ່ວຍ ດັ່ງນັ້ນ ເອັດດາ ໄດ້ເວົ້າວ່າ ຈະອອກໄປເບິ່ງວ່າແມ່ນຫຍັງໄດ້ເກີດຂຶ້ນ ແລ້ວລາວກໍ່ໄດ້ບິນອອກໄປເພື່ອຊອກຫາ ທ່ານຫມໍ ແມງມູມ.



ຫຼັງຈາກເດີນທາງໄປໄດ້ໄລຍະໜຶ່ງ ທ່ານໝໍກໍ່ໄດ້ມາເຖິງຈຸດທີ່ລາວຕ້ອງຜ່ານ ຄື ເຮືອນຂອງໄກ່. ລາວໄດ້ສັງເກດເຫັນໄກ່ແມ່ຢູ່ທາງຂ້າງກັບຜົວລາວ ດັ່ງນັ້ນ ແມງມູມຈຶ່ງໄປລີ້ຢູ່ທາງຫລັງຂອງຕົ້ນໄມ້ໃຫຍ່. ລາວພະຍາຍາມມິດງຽບຢູ່ ແຕ່ຫົວໃຈຂອງລາວເຕັ້ນຢູ່ "ຕຸບ" "ຕຸບ" "ຕຸບ" "ຕຸບ". ເມື່ອ ເອັດດາ ໄດ້ມາຮອດເຮືອນໄກ່ ລາວໄດ້ສັງເກດເຫັນຖົງຢາວາງຢູ່ເທິງດິນແລ້ວກໍ່ເຫັນແມງມູມຢ້ານສັ່ນ ຢູ່ທາງຫລັງຂອງຕົ້ນໄມ້. ລາວທັນໄດ້ອ່ານແຕ່ຄຳວ່າ "ກິນຂ້ອຍ" ທີ່ໄດ້ຂຽນໄວ້ຢູ່ແຜ່ນເຈ້ຍ ທັນໃດນັ້ນແມ່ໄກ່ກໍ່ໄດ້ບິນລົງມາຫາ ທ່ານໝໍແມງມູມແລ້ວກໍ່ກິນລາວ.



ເອັດດາ ມີຄວາມຕົກໃຈຫລາຍທີ່ສຸດ ແລ້ວກໍ່ຟ້າວບິນກັບໄປເຮືອນ. ໃນຂະນະນັ້ນ ທຸກສິ່ງຢ່າງໄດ້ຜ່ານພົ້ນໄປດ້ວຍຄວາມ ເສຍໃຈ, ທີ່ເຮືອນຂອງເມັດດາ. ລູກຂອງລາວໄດ້ຕາຍຈາກໄປ ແລະ ເອັດດາ ກໍ່ໄດ້ສົ່ງຂ່າວກ່ຽວກັບຊະຕາກຳຂອງແມງມູມແລ້ວ ເມັດດາກໍ່ເກີດມີຄວາມໂມໂຫຢ່າງຮ້າຍແຮງ ແລ້ວກໍ່ໄດ້ຕັດສິນໃຈກິນໄກ່ແຕ່ມື້ນັ້ນເປັນຕົ້ນມາ, ເພື່ອເປັນການລົງໂທດທີ່ໄກ່ໄດ້ກິນ ທ່ານຫມໍແມງມູມຜູ້ມີບຸນຄຸນໃຫ້ຕາຍຈາກ ໄປໂດຍບໍ່ມີວັນກັບຄືນມາ.



Adda fut tellement surprise qu'elle resta bouche bée. Elle rentra très vite à la maison. Pendant ce temps-là, les choses allaient de plus en plus mal chez Madda. Son petit était mort. Dès que Madda apprit le triste sort du médecin, elle fut vraiment très en colère. Dorénavant elle décida qu'elle mangerait les poussins pour venger l'excellent Docteur Araignée disparu prématurément.



Après avoir longtemps marché, le médecin était sur le point d'atteindre la maison de la Poule. Il remarqua que la Poule était dehors avec son mari, aussitôt il se cacha derrière un gros arbre. Il essayait d'être très silencieux, mais son cœur battait à toute allure « Boum-Boum », « Boum-Boum ». Lorsque Adda arrivait à la maison de la Poule, elle remarqua qu'un joli petit sac brodé d'une croix rouge gisait sur le sol et elle vit Docteur Araignée immobilisé par la peur derrière l'arbre. Elle parvenait juste à lire les mots « M'A MANGÉ » sur le papier qui sortait du sac quand la Poule goba Docteur Araignée en un clin d'œil.



Docteur Araignée accepta de venir au chevet du malade et commença à préparer ses affaires. Dans son petit sac brodé d'une croix rouge, il ajouta différents médicaments, bouteilles de sirop et comprimés. Cependant il n'était pas très sûr qu'Adda connaisse les véritables intentions de la Poule. Au cas où il disparaîtrait, il écrivit un message de sa belle écriture disant « Je suis parti pour aider Madda dont le petit est très malade, MAIS LA POULE M'A MANGÉ ! ». Puis il glissa le message dans son sac et se mit en route. Il marchait le plus vite possible car il savait que la situation était grave.

Pendant ce temps là, Madda et sa sœur étaient de plus en plus inquiètes. Le temps leur semblait interminable car Docteur Araignée n'était pas encore arrivé au chevet du petit malade. Adda promit donc d'aller au devant du médecin pour savoir ce qu'il en était.



La sœur prépara ses affaires et s'envola dans la forêt à la recherche du Docteur Araignée. Après un long moment, elle le trouva occupé à se réchauffer au soleil au milieu de sa belle toile accrochée à un grand chêne. Comme d'habitude, sa trousse médicale était prête pour les urgences.

« Docteur Araignée, mon neveu est très malade et il a vraiment besoin d'un médecin. Je suis venu vous chercher » dit Adda. Docteur Araignée répondit : « Je connais bien votre sœur et je voudrais bien l'aider. Mais elle habite près de la maison de la Poule. J'ai peur de passer par là parce qu'ELLE MANGE LES ARAIGNEES. » Mais Adda rétorqua : « Je pense que vous ne devez pas vous inquiéter. Je ne peux pas imaginer qu'elle fasse du mal au médecin qui viendrait aider un petit oiseau malade. »



Il y a très longtemps, bien avant l'arrivée des hommes sur la Terre, une Maman Faucon, appelée Madda, se trouvait dans la forêt. Elle avait de nombreux petits en bonne santé, mais un jour l'un d'entre eux fut très malade. Madda se faisait beaucoup de soucis pour son petit et demanda à sa sœur Adda ce qu'elle devait faire. Adda eut une idée de génie et dit :
« Je connais un médecin extraordinaire, c'est vraiment le meilleur de la forêt. Docteur Araignée est célèbre pour ses talents et je peux lui demander de venir nous aider. »



# SAVEZ-VOUS POURQUOI LE FAUCON MANGE LES POUSSINS ?



Conte
Illustré par le Moine Phetsamone
En lao par le Moine Anne Soukhaphonh
En français par Nadine Beaugrand